ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 593 /ຈນວ

ວັນທີ 7.6-2023

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ລົງສຶກສາ, ສໍາຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ

- ອີງຕາມ ໝວດທີ IV ມາດຕາ 19 ແລະ ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ວ່າດ້ວຍ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ບົດບັນທຶກຄວາມເຂົ້າໃຈ ເພື່ອສຶກສາ, ສໍາຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ສະບັບລົງວັນທີ 02 ມິຖຸນາ 2023;
- ອີງຕາມ ບົດລາຍງານ ຂອງພະແນກ ແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ສະບັບເລກທີ 485/ພຜທ.ຫລປ.ນວ, ລົງວັນທີ 23 ພຶດສະພາ 2023.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບລົງສຶກສາ, ສໍາຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ປະກອບດ້ວຍບັນດາທ່ານ ດັ່ງນີ້:

| | | |
|---|---|---|
| 1. ທ່ານ ຄໍາຕັນ ແກ້ວຫາວົງ, | ຮອງຫົວໜ້າ ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ | ເປັນຫົວໜ້າ; |
| 2. ທ່ານ ສັງວອນ ພົມມະສອນ, | ຮອງເຈົ້າເມືອງສັງທອງ | ເປັນຮອງ; |
| 3. ທ່ານ ສິນລະປະກອນ ພົມມະໄຊສີ, | ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ | ເປັນຄະນະ; |
| 4. ທ່ານ ວາດສະໜາ ສີຈະເລີນ, | ຮອງຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ | ເປັນຄະນະ; |
| 5. ທ່ານ ພຸດທະເສນ ສິນທະວົງ, | ຮອງຫົວໜ້າ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ | ເປັນຄະນະ; |
| 6. ທ່ານ ຄໍາຄູນ ໃບລາຕຣີ, | ຮອງຫົວໜ້າ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ, | ເປັນຄະນະ; |
| 7. ທ່ານ ບຸນລໍ້າ ວົງສຸທີ, | ຮອງຫົວໜ້າ ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ | ເປັນຄະນະ; |

8. ທ່ານ ...................., ຮອງຫົວໜ້າພະແນກການຕ່າງປະເທດ ນະຄອນຫຼວງວຽງຈັນ ເປັນຄະນະ;

9. ພັທ ວັນໄຊ ສີລິປັນຍາ, ຫົວໜ້າຫ້ອງການ ປກຊ-ປກສ ນະຄອນຫຼວງວຽງຈັນ ເປັນຄະນະ;

10. ພັທ ໂອໄທ ພົນນະພາ, ຮອງຫົວໜ້າຫ້ອງການເສນາທິການ, ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ເປັນຄະນະ;

11. ທ່ານ ຜູ້ຕາງໜ້າ ກົມແຜນທີ່, ກະຊວງພາຍໃນ ເປັນຄະນະ;

12. ທ່ານ ຜູ້ຕາງໜ້າ ກົມຊາຍແດນ, ກະຊວງປ້ອງກັນປະເທດ ເປັນຄະນະ;

13. ທ່ານ ຜູ້ຕາງໜ້າ ຫ້ອງການຄະນະກຳມະການຊາຍແດນແຫ່ງຊາດ, ກະຊວງການຕ່າງປະເທດ ເປັນຄະນະ;

14. ທ່ານ ຜູ້ຕາງໜ້າ ກົມສົນທິສັນຍາ, ກະຊວງການຕ່າງປະເທດ ເປັນຄະນະ;

15. ທ່ານ ຈັກກະພັນ ອຳພາວັນ, ປະທານບໍລິສັດທີ່ປຶກສາ ບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ ເປັນຄະນະ.

- ສິດ ແລະ ໜ້າທີ່ຂອງຄະນະດັ່ງກ່າວ ມີດັ່ງນີ້:

1) ຈັດກອງປະຊຸມ, ຄົ້ນຄວ້າປຶກສາຫາລືແບ່ງວຽກ, ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະທ່ານໃນຄະນະທີ່ຖືກແຕ່ງຕັ້ງລົງເຮັດວຽກຕົວຈິງ;
2) ສ້າງແຜນການເຄື່ອນໄຫວ, ສະຫຼຸບ ແລະ ລາຍງານ ຜົນການເຄື່ອນໄຫວວຽກງານຂອງຄະນະຮັບຜິດຊອບ ໃນການລົງເຮັດວຽກໃນຄັ້ງນີ້;
3) ຈັດກອງປະຊຸມສຳມະນາເພື່ອລະດົມແນວຄິດນຳປະຊາຊົນທີ່ນຳໃຊ້ພື້ນທີ່ເຂດດັ່ງກ່າວໃຫ້ເຂົ້າໃຈຕໍ່ຈຸດປະສົງຂອງການສຶກສາສຳຫຼວດໃນຄັ້ງນີ້;
4) ເຮັດວຽກຮ່ວມກັບບໍລິສັດ ໂດຍມີການຄົ້ນຄວ້າ, ວາງແຜນງານ, ແຜນງົບປະມານຢ່າງລະອຽດໃນການຈັດຕັ້ງປະຕິບັດ;
5) ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ບໍລິສັດ ລົງສຶກສາ, ສຳຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ຕາມເນື້ອໃນຈິດໃຈ ຂອງປຶ້ມບັນທຶກຄວາມເຂົ້າໃຈ ສະບັບລົງວັນທີ 02 ມິຖຸນາ 2023;
6) ແຕ່ງຕັ້ງບຸກຄະລາກອນເພີ່ມເຕີມ ໃນການຊ່ວຍວຽກ;"
7) ເປີດກອງປະຊຸມ ເພື່ອທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ໃນທຸກ 3 ເດືອນ, ຖ້າມີຄວາມຈຳເປັນ ຫຼື ບໍລິສັດສຶກສາຄວາມເປັນໄປໄດ້ສຳເລັດກ່ອນກຳນົດເວລາ ສາມາດນຳສະເໜີຝ່າຍ ກ ເປີດກອງປະຊຸມລາຍງານສະຫຼຸບໄດ້;
8) ສະຫຼຸບ ລາຍງານຄວາມຄືບໜ້າຜົນຂອງການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງຄະນະໃຫ້ອົງການປົກຄອງ ນະຄອນຫຼວງວຽງຈັນ ຊາບເປັນແຕ່ລະໄລຍະ;
9) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 2** ສຳລັບງົບປະມານຄ່າໃຊ້ຈ່າຍໃນການເຄື່ອນໄຫວວຽກງານທັງໝົດຂອງຄະນະກຳມະການ ແມ່ນມອບໃຫ້ບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ ເປັນຜູ້ຮັບຜິດຊອບ.

**ມາດຕາ 3** ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ເມືອງສັງທອງ; ພະແນກແຜນການ ແລະ ການລົງທຶນ; ພະແນກກະສິກຳ ແລະ ປ່າໄມ້; ພະແນກໂຍທາທິການ ແລະ ຂົນສົ່ງ; ພະແນກຖະແຫຼງຂ່າວ, ວັດທະ

ນະທຳ ແລະ ທ່ອງທ່ຽວ; ພະແນກອຸດສາຫະກຳ ແລະ ການຄ້າ; ກອງບັນຊາການທະຫານ; ພະແນກການຕ່າງປະເທດ; ຫ້ອງການປກຊ-ປກສ ນະຄອນຫຼວງວຽງຈັນ; ກົມແຜນທີ່, ກະຊວງພາຍໃນ; ກົມຊາຍແດນ, ກະຊວງປ້ອງກັນປະເທດ; ຫ້ອງການຄະນະກຳມະການຊາຍແດນແຫ່ງຊາດ, ກະຊວງການຕ່າງປະເທດ; ກົມສົນທິສັນຍາ, ກະຊວງການຕ່າງປະເທດ; ບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ, ທຸກພາກສ່ວນທີ່ກ່ຽວຂ້ອງ, ບັນດາທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

**ພູຂົງ ບັນນະວົງ**

<u>ບ່ອນສົ່ງ :</u>

- ທ່ານ ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ.
- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ 01 ສະບັບ.
- ເມືອງສັງທອງ 01 ສະບັບ.
- ພະແນກແຜນການ ແລະ ການລົງທຶນ ນວ 01 ສະບັບ.
- ພະແນກໂຍທາທິການ ແລະ ຂົນສົ່ງ ນວ 01 ສະບັບ.
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 01 ສະບັບ.
- ພະແນກກະສິກຳ ແລະ ປ່າໄມ້ ນວ 01 ສະບັບ.
- ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນວ 01 ສະບັບ.
- ກອງບັນຊາການທະຫານ ນວ 01 ສະບັບ.
- ພະແນກການຕ່າງປະເທດ ນວ 01 ສະບັບ.
- ຫ້ອງການປກຊ-ປກສ ນວ 01 ສະບັບ.
- ກົມແຜນທີ່, ກະຊວງພາຍໃນ 01 ສະບັບ.
- ກົມຊາຍແດນ, ກະຊວງປ້ອງກັນປະເທດ 01 ສະບັບ.
- ຫ້ອງການຄະນະກຳມະການຊາຍແດນແຫ່ງຊາດ, ກະຊວງການຕ່າງປະເທດ 01 ສະບັບ.
- ກົມສົນທິສັນຍາ, ກະຊວງການຕ່າງປະເທດ 01 ສະບັບ.
- ບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ 01 ສະບັບ.
- ເກັບມ້ຽນສຳເນົາ 02 ສະບັບ.